ວາລະສານ

# ກະສິກຳ ແລະ ປ່າໄມ້

ປະຈຳ ອາທິດວັນທີ 29 ມັງກອນ ຫາ 02 ກຸມພາ 2024



ປະຊາຊົນ ບ້ານບອນ ເມືອງຊຳເໜືອ ແຂວງ ຫົວພັນ ຜະລິດກາເຟເປັນສິນຄ້າ

ຫ້ອງການກະຊວງກະສິກຳ ແລະ ປ່າໄມ້



# ປະຊາຊົນ ບ້ານ ບອນ ເມືອງ ຊຳເໜືອ ແຂວງ ຫົວພັນ ຜະລິດກາເຟເປັນສິນຄ້າ

ເພື່ອຊ່ວຍແກ້ໄຂຄວາມທຸກຍາກຂອງປະຊາຊົນ ແລະ ຢຸດຕິໃນການປູກຝິ່ນ, ສົ່ງເສີມການສ້າງອາຊີບ, ສ້າງລາຍຮັບແບບຍືນຍົງໃຫ້ແກ່ປະຊາຊົນ ແລະ ສົ່ງເສີມການປູກກາເຟໃຫ້ກາຍເປັນສິນຄ້າ,ໂຄງການ ການພັດທະນາປ່ຽນແທນການປູກຝິ່ນ ໂດຍໄດ້ຮັບການສະໜັບສະໜູນຈາກລັດຖະບານປະເທດລຸກຊຳບວກ ແລະ ສະຫະລັດອາເມລິກາ, ອົງການສະຫະປະຊາຊາດ ເພື່ອຕ້ານຢາເສບຕິດ ແລະ ອາຊະຍາກຳ UNODC ຫຼື ໂຄງການ Lao z 49 ແລະ ໂຄງການ DGRV, ມີຄູ່ຮ່ວມງານໂດຍຄະນະກຳມະການແຫ່ງຊາດເພື່ອກວດກາ ແລະ ຄວບຄຸມຢາເສບຕິດ (ຂັ້ນສູນກາງ),ພະແນກ ກວດກາ ແລະ ຄວບຄຸມຢາເສບຕິດ (ຂັ້ນແຂວງ) ແລະ ພະແນກ ກະສິກຳ ແລະ ປ່າໄມ້ ແຂວງ, ຂະແໜງພັດທະນາຊົນນະບົດ ແລະ ສະຫະກອນ.

ທ່ານ ນ. ສົມພອນ ສິນໄຊປັນຍາ ພະນັກງານສົ່ງເສີມຂອງໂຄງການ UNODC ປະຈຳ ເມືອງ ຊຳເໜືອ ແຂວງຫົວພັນ ໄດ້ລາຍງານສະພາບລວມຂອງໂຄງການຮູ້ວ່າ: ໂຄງການແມ່ນເລີ່ມແຕ່ປີ 2016 ໃນແຂວງຫົວພັນ ໂຄງການໄດ້ສະໜັບສະໜູນຢູ່ 4 ເມືອງຄື: ເມືອງ ຊ່ອນ, ຊຳເໜືອ, ຊຳໃຕ້ ແລະ ເມືອງ ກວັນ ລວມຈຳນວນທັງໝົດ 12 ບ້ານ, ກິດຈະກຳຫຼັກຂອງໂຄງການ ແມ່ນການສົ່ງເສີມການປູກກາເຟ ເປັນຫຼັກ, ສຳຮອງ ແມ່ນການສົ່ງເສີມການລ້ຽງສັດ ແລະ ບຳບັດຜູ້ຕິດຢາເສບຕິດ ສຳລັບເມືອງຊຳເໜືອ ກໍ່ຄື ບ້ານບອນແມ່ນມີ ຢູ່ 30 ຄອບຄົວທີ່ປູກກາເຟ ມີເນື້ອທີ່ 30 ເຮັກຕາ, ຈຳນວນຕົ້ນກາເຟປະມານ 150.000 ກວ່າຕົ້ນ ເຊິ່ງເລີ່ມຕົ້ນປູກໃນປີ 2018 ແລະ ໄດ້ເກັບກູ້ຜົນຜະລິດໃນປີ 2021 ເປັນຕົ້ນມາ, ອີງໃສ່ສະພາບ ຄວາມເປັນຢູ່ຂອງປະຊາຊົນພາຍໃນບ້ານບອນໃນເມື່ອກ່ອນເພິ່ນເຄີຍມີການປູກຝິ່ນ ເພື່ອຢາກລືບລ້າງໃນຈຸດນີ້ ພວກເຮົາໄດ້ເອົາກາເຟມາສົ່ງເສີມໃຫ້ປູກ, ຮອດປັດຈຸບັນຖືວ່າໄດ້ຫຼຸດຜ່ອນການປູກຝິ່ນ ປະຊາຊົນຫັນມາປູກກາເຟ ແລະ ມີລາຍຮັບທີ່ສົມບູນ, ມາປັດຈຸບັນປະຊາຊົນຢູ່



ບ້ານບອນແມ່ນໄດ້ຂາຍກະເຟໄດ້ 2 ປີ ແລ້ວ ທັງໝົດບ້ານຂາຍຜົນຜະລິດໄດ້ 600 ລ້ານກີບ ໃນປີ 2022 ແລະ ໃນປີ 2023 ຂາຍຜົນຜະລິດໄດ້ 1 ຕື້ກວ່າກີບ, ໃນເບື້ອງໂຄງການພວກເຮົາໄດ້ສະໜັບສະໜູນແນວພັນ, ວັດຖຸອຸປະກອນເຄື່ອງສີການເຟ, ສູນປຸງແຕ່ງ ແລະ ລານຕາກ ພ້ອມທັງເຕັກນິກວິຊາການມາລົງຕິດຕາມຊ່ວຍເຫຼືອປະຊາຊົນນັບແຕ່ປູກຈົນຮອດການຂາຍເຫັນໄດ້ວ່າການປ່ຽນແປງຂອງທາງບ້ານແມ່ນດີຂື້ນ, ພົ້ນເດັ່ນໃນ ບ້ານບອນມີ 02 ຄອບຄົວທີ່ກາຍເປັນຄອບຄົວຕົວແບບ ມີລາຍຮັບຈາກການຂາຍກາເຟ 70-100 ລ້ານກວ່າກີບ.

ທ່ານ ສິນໄຊ ເຮືອງຄຳແພງ ໜຶ່ງໃນຄອບຄົວຕົວແບບ ໃນການປູກກາເຟບ້ານບອນ ໃຫ້ຮູ້ວ່າ: ໃນເມື່ອກ່ອນຄອບຄົວແມ່ນເຮັດໄຮ່ເຮັດສວນ ຜົນຜະລິດກໍ່ໄດ້ບໍ່ຫຼາຍ ລາຍໄດ້ບໍ່ກຸ້ມກິນ ເມື່ອມີໂຄງການເຂົາມາຕົນເອງໄດ້ມີໂອກາດເຂົ້າຮ່ວມ ແລະ ເລີ່ມປູກກາເຟ ແລະ ໄດ້ເກັບໝາກກາເຟໃນປີ 2020 ໃນປີທຳອິດໝາກໍ່ຍັງບໍ່ຫຼ!ຍປານໃດມາຮອດປີ 2021-2023 ຜົນຜະລິດແມ່ນເພີ່ມຂື້ນມາເລື້ອຍໆ ຈົນຮອດ 9 ໂຕນປາຍ ຂາຍໄດ້ເງິນທັງໝົດ ປະມານ 100 ລ້ນກີບ ແລະ ຄາດວ່າປີ 2024 ນີ້ໝາກແມ່ນຈະໄດ້ຫຼາຍກວ່າເກົ່າເພາະຕົ້ນກາເຟເປັນໝາກດົກ, ຊີວິດການເປັນຢູ່ກໍ່ຄ່ອຍດີຂື້ນເລື້ອຍໆ.

ຍ້ອນຄວາມເຊື່ອໝັ້ນ ໃນການນຳພາ ແລະ ຊຸກຍູ້ສົ່ງເສີມຂອງທາງພາກລັດ ແລະ ສາກົນ, ທັງໃນດ້ານວັດຖຸອຸປະກອນ, ຄວາມຮູ້ວິຊາການ, ການຕະຫຼາດ, ການຕິດຕາມຢ່າງໃກ້ຊິດຕິດແທດ ສຸມໃສ່ພັດທະນາຊົນນະບົດ ກໍ່ຄືການພັດທະນາອາຊີບ ແລະ ສ້າງລາຍຮັບແກ່ປະຊາຊົນໃນເຂດຊົນນະບົດ ເຫັນໄດ້ວ່າຄອບຄົວທີ່ປູກກາເຟມີຊີວິດການເປັນຢູ່ດີຂື້ນກວ່າແຕ່ກ່ອນ. ບາງຄອບຄົວມີແຜນຢາກຂະຫຍາຍພື້ນທີ່ເພີ່ມຕື່ມ, ຄອບຄົວທີ່ມີອາຊີບກະສິກຳ ແບບເລື່ອນລອຍ ກໍ່ຢູ່ກັບທີ່ເພື່ອດູແລສວນກາເຟຂອງຕົນ ຊີວິດການເປັນຢູ່ກໍ່ນັບມື້ນັບດີຂື້ນ ສາມາດຜະລິດກາເຟທີ່ມີຄຸນນະພາບສົ່ງອອກເປັນສິນຄ້າພາຍໃນ ແລະ ຕ່າງປະເທດ.

ຄະນະຮັບຜິດຊອບ:
ທ່ານ ສີປະໄພ ໄຊສີງຄາມ
ທ່ານ ສີສະຫວາດ ທອມດາລາ

ບັນນາທິການ:
ທ່ານ ກິດຊະນະ ພົມມະຈັນ
ທ່ານ ໂຊລາ ສີມມະລາວົງ
ທ່ານ ນ. ທອງພຸດ ວົງພະຈັນ
ທ່ານ ນ. ຄຳແພງ ເກສອນ

ຈັດໜ້າອອກແບບໂດຍ:
ທ່ານ ນ. ສີອຳມອນ ໄຊຍະລາດ

ຕິດຕໍ່ ແລະ ລົງໂຄສະນາໄດ້ທີ່: ພະແນກໂຄສະນາ ແລະ ຂ່າວສານ, ຫ້ອງການກະຊວງ 021 410154;
website: www.maf.gov.la;
Facebook: ຂ່າວສານກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ;
Youtube: ລາຍການກະສິກຳ;ແລະ ປ່າໄມ້;